ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY
PHONETONGSAVAT RD, BAN PHONETONGSAVAT, CHANTHABULY DISTRICT, VIENTIANE CAPITAL LAO P.D.R
OFFICE TEL: (+856-21) 415645, FAX / TEL: (+856-21) 262984 , WWW.SOUVANNY.COM

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ເລກທີ: 02.43 /ສວນ

ນະຄອນຫຼວງວຽງຈັນ,ວັນທີ 18 ກຸມພາ 2022

ມະຕິ
ກອງປະຊຸມສະພາບໍລິຫານ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
ຄັ້ງທີ 01 ປະຈຳປີ 2022, ວັນທີ 18/02/2022

ກອງປະຊຸມສະພາບໍລິຫານຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຄັ້ງທີ 01/2022 ໄດ້ເປີດຂຶ້ນໃນເວລາ 14:00 ໂມງ ຂອງວັນທີ 18 ກຸມພາ 2022 ທີ່ສຳນັກງານໃຫຍ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໂດຍເປັນປະທານຂອງ **ທ່ານ ປອ ໄຊພອນ ກອງມະນີລາ** ສະມາຊິກສະພາບໍລິຫານ, ສະມາຊິກອິດສະຫຼະ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ, ພ້ອມດ້ວຍສະມາຊິກສະພາບໍລິຫານ ແລະ ຜູ້ທີ່ຖືກເຊີນເຂົ້າຮ່ວມ.

ກອງປະຊຸມໄດ້ປຶກສາຫາລືບັນຫາຕ່າງໆພ້ອມໄດ້ມີມະຕິຕົກລົງ ຕາມລາຍລະອຽດລຸ່ມນີ້:

1. **ມະຕິ:** ເຫັນດີຮັບຮອງບົດລາຍງານກອງປະຊຸມສະພາບໍລິຫານໃນຄັ້ງທີ 04/2021.
2. **ມະຕິ:** ເຫັນດີນຳບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2021 ແລະ ຮ່າງບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2021 ໂດຍແຕ່ງຕັ້ງໃຫ້ **ທ່ານ ພັນໂນລາ ສຸຄະບັນດິດ** ເປັນຜູ້ປະສານງານກັບຜູ້ກວດສອບພາຍນອກ ຫາກຮ່າງບົດລາຍງານການເງິນຂອງບໍລິສັດມີການປ່ຽນແປງໃນສ່ວນທີ່ເປັນສາລະສຳຄັນແມ່ນໃຫ້ **ທ່ານ ພັນໂນລາ ສຸຄະບັນດິດ** ເປັນຜູ້ແຈ້ງໃຫ້ສະພາບໍລິຫານຮັບຊາບອີກເທື່ອໜຶ່ງ ແຕ່ຫາກມີການແກ້ພຽງເລັກໜ້ອຍ ທີ່ບໍ່ເຮັດໃຫ້ບົດລາຍງານການເງິນມີການປ່ຽນແປງໃນສາລະສຳຄັນ ໃຫ້ຖືວ່າຮ່າງບົດລາຍງານການເງິນສະບັບດັ່ງກ່າວເປັນບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2021 ທີ່ຈະສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງຕໍ່ໄປ.
3. **ມະຕິ:** ເຫັນດີນຳແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2022 ແລະ ໃຫ້ນຳແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2022 ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021 ເພື່ອພິຈາລະນາ ແລະ ຮັບຮອງຕໍ່ໄປ.
4. **ມະຕິ:** ເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ ໃນປີ 2021 ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນໃນມື້ປິດປຶ້ມບັນຊີຜູ້ຖືຮຸ້ນ ເຊິ່ງມື້ດັ່ງກ່າວຈະໄດ້ກຳນົດຕໍ່ໄປໃນ **ວາລະທີ 10** ໃນອັດຕາ **41,80** ສ່ວນຮ້ອຍຂອງກຳໄລສຸດທິພາຍຫຼັງຫັກຄັງສຳຮອງຕາມລະບຽບການ ແລະ ຄັງສຳຮອງສະສົມ ຕາມນະໂຍບາຍການຈ່າຍເງິນປັນຜົນຂອງບໍລິສັດ ເຊິ່ງອັດຕາທີ່ແນ່ນອນ ແລະ ກຳນົດມື້ຈ່າຍເງິນປັນຜົນແມ່ນມອບໃຫ້ ຜູ້ອຳນວຍການໃຫຍ່ເປັນຜູ້ຕັດສິນໃຈ ແລະ ແຈ້ງໃຫ້ຜູ້ຖືຮຸ້ນຮັບຊາບ ຜ່ານຊ່ອງທາງສື່ສານຂອງຕະຫຼາດຫຼັກຊັບລາວ.

5. **ມະຕິ:** ເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງ **ບໍລິສັດ ພຣາຍສ ວໍເຕີເຮົ້າສ໌ກຸເປີ໌ສ (ລາວ) ຈຳກັດຜູ້ດຽວ (PriceWaterHouseCoopers (Lao) Sole Company Limited)** ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ 2022 ໂດຍມີຄ່າບໍລິການເປັນເງິນຈຳນວນ ບໍ່ກາຍ **36.500** ໂດລາສະຫະລັດ.
6. **ມະຕິ:** ເຫັນດີໃຫ້ **ທ່ານ ສົມຈິດ ອົນທະມິດ** ເປັນປະທານສະພາບໍລິຫານ, **ທ່ານ ນາງ ຄຳໄຂ ລໍວັນໄຊ** ເປັນ ສະມາຊິກສະພາບໍລິຫານ ແລະ ແຕ່ງຕັ້ງ **ທ່ານ ປອ ໄຊພອນ ກອງມະນີລາ** ເປັນຮອງປະທານສະພາບໍລິຫານ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ແທນປະທານສະພາບໍລິຫານ, ຮອງປະທານສະພາບໍລິຫານຄົນ ເກົ່າທີ່ລາອອກໄປໂດຍມີອາຍຸການເທົ່າກັບອາຍຸການທີ່ຍັງເຫຼືອຂອງຄົນເກົ່າທີ່ລາອອກໄປແລ້ວນັ້ນ ເພື່ອສະເໜີ ໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງຕໍ່ໄປ.
7. **ມະຕິ:** ເຫັນດີໃຫ້ສະເໜີແກ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາ ແລະ ອະນຸມັດ ປັບເງິນອຸດໜູນເຂົ້າຮ່ວມ ກອງປະຊຸມຂອງສະມາຊິກສະພາບໍລິຫານ ແລະ ສະມາຊິກອິດສະຫຼະ ຂອງບໍລິສັດ ເພື່ອໃຫ້ສອດຄ່ອງກັບ ສະພາວະຕະຫຼາດ ຈາກເດີມດັ່ງນີ້:

1. ເງິນອຸດໜູນເຂົ້າຮ່ວມກອງປະຊຸມໃນແຕ່ລະເທື່ອ ສະເພາະຜູ້ທີ່ເປັນສະມາຊິກອິດສະຫຼະເທົ່ານັ້ນ
   - ປະທານສະພາບໍລິຫານ 6.500.000 ກີບ ຕໍ່ 1 ຄັ້ງ;
   - ຮອງປະທານສະພາບໍລິຫານ 4.300.000 ກີບ ຕໍ່ 1 ຄັ້ງ; ແລະ
   - ສະມາຊິກສະພາບໍລິຫານ 4.300.000 ກີບ ຕໍ່ 1 ຄັ້ງ.
2. ເງິນອຸດໜູນເຂົ້າຮ່ວມກອງປະຊຸມໃນແຕ່ລະເທື່ອ ຂອງສະມາຊິກສະພາບໍລິຫານ ຂອງບໍລິສັດ ທີ່ບໍ່ແມ່ນສະ ມາຊິກອິດສະຫຼະ
   - ສະມາຊິກສະພາບໍລິຫານ 2.200.000 ກີບ ຕໍ່ 1 ຄັ້ງ.

8. **ມະຕິ:** ເຫັນດີໃຫ້ບໍລິສັດເຂົ້າເຮັດສັນຍາກູ້ຢືມເງິນຕາມລາຍລະອຽດທີ່ໄດ້ນຳສະເໜີເທິງນີ້ ແລະ ນຳອາຄານ ແລະ ສິ່ງປຸກສ້າງຂອງບໍລິສັດ ສາຂາສະຫວັນນະເຂດເຂົ້າເປັນຊັບຄ้ຳປະກັນການກູ້ຢືມເງິນດັ່ງກ່າວ ແລະ ເຫັນດີ ໃຫ້ **ທ່ານ ວັດດານາ ສຸຄະບັນດິດ** ເປັນຜູ້ມີອຳນາດລົງນາມໃນສັນຍາ ແລະ ເອກະສານທີ່ກ່ຽວຂ້ອງໃນນາມຂອງ ບໍລິສັດ ລວມທັງມີສິດແລະອຳນາດໃນການແຕ່ງຕັ້ງຜູ້ອື່ນເພື່ອດຳເນີນການດັ່ງກ່າວແທນ.
9. **ມະຕິ:** ເຫັນດີໃຫ້ມີການຮຽກປະຊຸມສາມັນຜູ້ຖືຮຸ້ນ ໃນວັນທີ **05 ເມສາ 2022** ເວລາ 14.00 ໂມງ ຢູ່ທີ່ ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ, ບ້ານ ໂພນທັນເໜືອ, ເມືອງ ໄຊເສດຖາ, ນະຄອນຫຼວງ ວຽງຈັນ ໂດຍມີວາລະເພື່ອພິຈາລະນາ ດັ່ງຕໍ່ໄປນີ້:

9.1 ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2021 ແລະ ຮ່າງບົດ ລາຍງານການເງິນຂອງບໍລິສັດ ປະຈຳປີ 2021;

9.2 ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2022;

9.3 ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ປີ 2021;

9.4 ພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າບໍລິການກວດ

ສອບບັນຊີຂອງຜູ້ກວດສອບບັນຊີພາຍນອກ ປີ 2022;

9.5 ພິຈາລະນາການແຕ່ງຕັ້ງປະທານ, ຮອງປະທານສະພາບໍລິຫານແທນປະທານ, ຮອງປະທານສະພາບໍລິຫານ ຜູ້ເກົ່າທີ່ລາອອກໄປ;

9.6 ພິຈາລະນາ ແລະ ອະນຸມັດປັບເງິນອຸດໜຸນເຂົ້າຮ່ວມກອງປະຊຸມຂອງສະມາຊິກສະພາບໍລິຫານຂອງ ບໍລິສັດ;

9.7 ເລື່ອງອື່ນໆ (ຖ້າມີ).

10. <u>ມະຕິ</u>: ເຫັນດີໃຫ້ກຳນົດເອົາວັນທີ **7 ມີນາ 2022** ເປັນມື້ປິດປຶ້ມບັນຊີຜູ້ຖືຮຸ້ນຂອງບໍລິສັດ ເພື່ອກຳນົດລາຍຊື່ຜູ້ຖືຮຸ້ນ ທີ່ມີສິດເຂົ້າຮ່ວມປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ແລະ ຮັບເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2021.

11. <u>ມະຕິ</u>: ເຫັນດີໃຫ້ແຕ່ງຕັ້ງ **ທ່ານ ລິດສະໝອນ ສໍພາບມີໄຊ** ແລະ **ທ່ານ ບຸນຖິ່ມ ຟອງວິລາດ** ໃຫ້ເປັນຜູ້ຕາງໜ້າບໍລິສັດຈົດທະບຽນເຊິ່ງມີຄວາມຮູ້ທາງດ້ານກົດໝາຍ ເພື່ອປະກອບສ່ວນເຂົ້າໃນຄະນະກວດກາກອງປະຊຸມຜູ້ຖືຮຸ້ນ ແລະ ລົງຄະແນນສຽງ ຕາມລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ ໃນສ່ວນການແຕ່ງຕັ້ງຕົວແທນຜູ້ຖືຮຸ້ນລາຍຍ່ອຍນັ້ນ ເຫັນດີມອບອຳນາດໃຫ້ **ທ່ານ ພັນໂນລາ ສຸຄະບັນດິດ** ແຕ່ງຕັ້ງໂດຍຄັດເລືອກເອົາຈາກຜູ້ຖືຮຸ້ນລາຍຍ່ອຍທີ່ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນມື້ດັ່ງກ່າວເຊິ່ງເປັນຜູ້ຖືຮຸ້ນລາຍຍ່ອຍຄືຖືຮຸ້ນບໍ່ເກີນ 5 ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຈົດທະບຽນ ແລະ ຊຳລະແລ້ວທັງໝົດ ແລະ ເປັນຜູ້ທີ່ມີຄຸນນະສົມບັດຕາມລາຍລະອຽດທີ່ກ່າວມາຂ້າງເທິງ.

ກອງປະຊຸມໄດ້ປິດລົງເວລາ 16:00 ໂມງ ຂອງວັນດຽວກັນ.

ປະທານສະພາບໍລິຫານ
ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY

ທ່ານ ປອ ໄຊພອນ ກອງມະນີລາ